# ການຢັ້ງຢືນຕົວຂອງທ່ານຕໍ່ Centrelink



We speak your language ☎ 13 1202

*Proving your identity to Centrelink* - **Lao**

ເວລາຂໍເງິນບຳນານ, ເງິນຊ່ວຍເຫລືອຕ່າງໆ ຫລືບໍຣິການຈາກ Centrelink ຊຶ່ງຕ້ອງການຫລັກຖານຢືນຢັນຕົວນັ້ນ ຜູ່ໃຊ້ບໍຣິການຕ້ອງ ຢືນຢັນຕົວເອງດ້ວຍເອກກະສານດັ້ງເດີມ ຕາມລາຍການທີ່ Centrelink ບົ່ງໄວ້ (ເບິ່ງຕາມໜ້າ 3 ແລະ 4)

**ຖ້າຫາກທ່ານມີບັນຫາໃນການຫາເອົາ ຫລື ສເນີເອກກະສານເຫລົ່ານີ້ ທ່ານຄວນຕິດຕໍ່ Centrelink ໄວທີ່ສຸດເທົ່າທີ່ຈະໄວໄດ້, ຕົວຢ່າງເຊັ່ນວ່າທ່ານເປັນຊາວອົພຍົບທີ່ມາຮອດໃຫມ່ໆ.**

## ສຳລັບການຂໍ:

| | |
|---|---|
| ABSTUDY (living allowance) | Newstart Allowance |
| Age Pension | Parenting Payment |
| Austudy Payment | Partner Allowance |
| Bereavement Allowance | Retirement Assistance for Farmers |
| Carer Payment | Sickness Allowance |
| Disability Support Pension | Special Benefit |
| Exceptional Circumstances Relief Payment | Widow Allowance |
| Farm Help | Wife Pension |
| Mature Age Allowance | Youth Allowance |

### ທ່ານຈະຕ້ອງມີ:

ຢ່າງນ້ອຍເອກກະສານຢ່າງນຶ່ງເພື່ອເປັນຫລັກຖານຢັ້ງຢືນການເກີດຢູ່ອອັສເຕຣເລັຍ ຫລື ການມາເຖິງອອັສເຕຣເລັຍ (ຕາມລາຍການຂ້າງລຸ່ມ)

**ແລະ**

ເອກກະສານອື່ນໆຈາກລາຍການທີ່ບົ່ງໄວ້ (ເບິ່ງໜ້າ 3 ແລະ 4) ຊຶ່ງຈະບວກກັນເປັນ 100 ຄະແນນ

## ສຳລັບການຂໍ:

| | |
|---|---|
| Carer Allowance | Mobility Allowance |

### ທ່ານຈະຕ້ອງມີ:

ຢ່າງນ້ອຍເອກກະສານຢ່າງນຶ່ງເພື່ອເປັນຫລັກຖານຢັ້ງຢືນການເກີດຢູ່ອອັສເຕຣເລັຍ ຫລື ການມາເຖິງອອັສເຕຣເລັຍ (ຕາມລາຍການຂ້າງລຸ່ມ)

**ແລະ**

ເອກກະສານອື່ນໆຈາກລາຍການທີ່ບົ່ງໄວ້ (ເບິ່ງໜ້າ 3 ແລະ 4) ຊຶ່ງຈະບວກກັນເປັນ 50 ຄະແນນ

| ເອກະສານຢັ້ງຢືນການເກີດ ແລະ ເອກະສານຢັ້ງຢືນການມາເຖິງອົອສເຕຣເລັຍ – ຄໍາອະທິບາຍ/ລັກສນະ | |
|---|---|
| **Australian Birth Certificate** | ໃບລາຍເກີດອົອສເຕຣລຽນໃບດັ້ງເດີມ ຫລື ໃບລາຍເກີດທີ່ຄັດອອກມາໃນຊື່/ຊື່ເກົ່າຂອງທ່ານ |
| **Australian Passport (current)** | ພາສປອຣ໌ຕອົອສເຕຣລຽນໃນປັດຈຸບັນເປັນຊື່/ຊື່ເກົ່າຂອງທ່ານ |
| **Citizenship Certificate** | ໜັງສືສັນຊາດອົອສເຕຣລຽນ ເປັນຊື່/ຊື່ເກົ່າຂອງທ່ານ |
| **Current Australian Visa** | ວີຊ່າເຂົ້າປະເທດອົອສເຕຣເລັຍໃນຖານະຜູ້ຢູ່ຖາວອນ ຫລື ນັກທ່ອງທ່ຽວສບັບປັດຈຸບັນ |
| **Document of Identity (DIMA)** | ເອກະສານຢັ້ງຢືນຕົວທີ່ອອກໃຫ້ໂດຍ Department of Immigration and Multicultural Affairs ແກ່ຜູ້ທີ່ບໍ່ມີສິດຢູ່ຖາວອນ |
| **Certificate of Evidence of Resident Status** | ເອກະສານຢັ້ງຢືນຕົວແກ່ຜູ່ມີສິດຢູ່ຖາວອນ (ຟອຣ໌ມ 283) ອອກໃຫ້ໂດຍ Department of Immigration and Multicultural Affairs ບົ່ງບອກຊື່/ຊື່ເກົ່າຂອງທ່ານ |
| **Certificate of Identity (DFAT)** | ເອກະສານຢັ້ງຢືນຕົວອອກໃຫ້ໃນຊື່/ຊື່ເກົ່າຂອງທ່ານໂດຍ Department of Foreign Affairs and Trade ເພື່ອໃຊ້ໃນການເດີນທາງໄປຕ່າງປະເທດພຽງຄັ້ງດຽວ |

ທ່ານຕ້ອງມີນຶ່ງໃນຈໍານວນເອກະສານເຫລົ່ານີ້ ແຕ່ຈະບໍ່ຖືກນັບເປັນຄະແນນທີ່ຕ້ອງການເພື່ອການຂໍເງິນ ຫລື ບໍຣິການຕ່າງໆ.

## ສໍາລັບການຂໍ:

Low Income Health Care Card

Commonwealth Seniors Health Card

**ທ່ານຈະຕ້ອງມີ:**

ເອກະສານຢ່າງໃດຢ່າງນຶ່ງຈາກລາຍການທີ່ບົ່ງໄວ້ (ເບິ່ງໜ້າ 3 ແລະ 4) ຊຶ່ງບອກເປັນ 50 ຄະແນນ

## ສໍາລັບການຂໍ:

Parenting Payment partnered

Low Income Health Care Card partnered

**ຄູ່ຂອງທ່ານ**ກໍຕ້ອງມີການຢັ້ງຢືນຕົວຂອງເຂົາດ້ວຍການມີເອກະສານດັ້ງເດີມຈາມລາຍການທີ່ບົ່ງໄວ້ (ເບິ່ງໜ້າ 3 ແລະ 4)

## ສໍາລັບການຂໍ:

Carer Allowance

Carer Payment

**ຜູ້ທີ່ໄດ້ຮັບການເບິ່ງແຍງ** ກໍຕ້ອງໄດ້ມີການຢັ້ງຢືນຕົວດ້ວຍການມີເອກະສານດັ້ງເດີມຕາມລາຍການທີ່ບົ່ງໄວ້ (ເບິ່ງໜ້າ 3 ແລະ 4)

| ເອກະສານ | ຄຳອະທິບາຍ/ລັກສນະ | ຄະແນນ |
|---|---|---|
| **Citizenship Certificate** | ໜັງສືສັນຊາດອ໊ອສເຕຣລຽນໃນຊື່/ຊື່ເກົ່າຂອງທ່ານ | **70** |
| **Australian Passport (current)** | ພາສປອຣ໌ຕອ໊ອສເຕຣລຽນສບັບປັດຈຸບັນເປັນຊື່/ຊື່ເກົ່າຂອງທ່ານ | **70** |
| **Australian Birth Certificate** | ໃບລາຍເກີດອ໊ອສເຕຣລຽນສບັບດັ້ງເດີມ ຫລື ໃບລາຍເກີດທີ່ຄັດອອກມາໃນຊື່/ ຊື່ເກົ່າຂອງທ່ານ | **70** |
| **Certificate of Evidence of Resident Status** | ເອກກະສານຢັ້ງຢືນຖານະຜູ່ມີສິດຢູ່ຖາວອນ (ຟອຣ໌ມ 283) ອອກໃຫ້ໂດຍ Department of Immigration and Multicultural Affairs, ບົ່ງບອກຊື່/ຊື່ເກົ່າຂອງທ່ານ | **70** |
| **Certificate of Identity (DFAT)** | ເອກກະສານຢັ້ງຢືນຕົວອອກໃຫ້ໃນຊື່/ຊື່ເກົ່າຂອງທ່ານໂດຍ Department of Foreign Affairs and Trade ສຳລັບຄົນອ໊ອສເຕຣລຽນໃຊ້ໃນການເດີນທາງໄປຕ່າງປະເທດພຽງຄັ້ງດຽວ | **70** |
| **Document of Identity (DIMA)** | ເອກກະສານຢັ້ງຢືນຕົວທີ່ອອກໃຫ້ໂດຍ Department of Immigration and Multicultural Affairs ແກ່ຜູ່ທີ່ບໍ່ມີສິດຢູ່ອ໊ອສເຕຣເລັຍຢ່າງຖາວອນ | **70** |
| **Current Australian Visa** | ວີຊ່າເຂົ້າປະເທດອ໊ອສເຕຣເລັຍໃນຖານະຜູ່ຢູ່ຖາວອນຫລື ນັກທ່ອງທ່ຽວສບັບປັດຈຸບັນ | **70** |
| **Defence Discharge Papers** | ໜັງສືລາອອກຈາກກຣົມທະຫານໃນຊື່/ຊື່ເກົ່າຂອງທ່ານ | **70** |
| **Shooter's or Firearm Licence** | ໃບອະນຸຍາດຍິງຫລືມີປືນສບັບປັດຈຸບັນທີ່ມີລາຍເຊັນ ແລະ/ຫລື ຮູບ,ຊື່ແລະທີ່ຢູ່ອັນດຽວກັນກັບເອກກະສານຄຳຮ້ອງ | **70** |
| **Security Licence** | ໃບອະນຸຍາດຮັກສາຄວາມປອດພັຍຫລືການຄວບຄຸມຝູງຄົນທີ່ມີລາຍເຊັນ ແລະ/ຫລື ຮູບ,ຊື່ແລະທີ່ຢູ່ອັນດຽວກັນກັບເອກກະສານຄຳຮ້ອງ. | **70** |
| **Bank Card or Passbook** | ປື້ມບັນຊີທະນາຄານ/ບັດເຄຣດິດ/ບັດເອທີເອັມພ້ອມດ້ວຍຊື່ຂອງສະຖາບັນການເງິນອັນປັດຈຸບັນທີ່ມີລາຍເຊັນຂອງທ່ານ | **40** |
| **Bank Statement** | ໃບຣາຍງານຂອງບັດເຄຣດິດ/ບັດເອທີເອັມ ຫລື ເຊັກທະນາຄານອັນປັດຈຸບັນທີ່ມີຊື່ແລະທີ່ຢູ່ຂອງທ່ານ. ບໍ່ແມ່ນໃບຮັບຈາກຕູ້ເອທີເອັມ. | **40** |
| **Child's Birth Certificate** | ໃບລາຍເກີດອ໊ອສເຕຣລຽນທີ່ມີຊື່ຂອງທ່ານເປັນພໍ່ແມ່/ຜູ່ປົກຄອງ, ບໍ່ແມ່ນອ້າຍນ້ອງ | **40** |
| **Driver's Licence - Motor Vehicle** | ໃບຂັບຂີ່ອັນປັດຈຸບັນທີ່ອອກໃຫ້ໂດຍທາງຣັຖຫລືອານາເຂດ, ໃບອະນຸຍາດຮຽນຂັບຂີ່ຫລືໃບຂັບຂີ່ຊົ່ວຄາວທີ່ມີລາຍເຊັນ ແລະ/ຫລື ຮູບ, ຊື່ແລະທີ່ຢູ່ອັນດຽວກັນກັບເອກກະສານຄຳຮ້ອງ | **40** |
| **Australian Divorce Papers** | ໜັງສືຢ່າຮ້າງຂອງອ໊ອສເຕຣເລັຍໃນຊື່/ຊື່ເກົ່າຂອງທ່ານ | **40** |
| **Educational Certificate** | ໃບປະກາສນີຍາບັດຂອງໂຮງຮຽນ/ການສຶກສາທີ່ມີຊື່/ຊື່ເກົ່າຂອງທ່ານ (ໂຮງຮຽນ/ TAFE/ມະຫາວິທຍາລັຍ). | **40** |
| **Australian Marriage Certificate** | ໜັງສືແຕ່ງງານຂອງອ໊ອສເຕຣເລັຍທີ່ອອກໃຫ້ແລະຮັບຮູ້ໂດຍຣັຖບານຣັຖ ຫລື ອານາເຂດ ບໍ່ແມ່ນອອກໃຫ້ໂດຍໂບສ | **40** |
| **Mortgage Paper** | ໜັງສືກູ້ຢືມເງິນທີ່ຖືກກົດໝາຍສຳລັບຊື້ເຮືອນໃນອ໊ອສເຕຣເລັຍໃນຊື່/ຊື່ເກົ່າຂອງທ່ານ | **40** |
| **Name Change** | ໜັງສືການປ່ຽນຊື່ ຫລື ລົງທະບຽນອອກສຽງເລືອກຕັ້ງທີ່ຖືກກົດໝາຍ | **40** |
| **Overseas Passport** | ພາສປອຣ໌ຕຕ່າງປະເທດທີ່ມີກາປະທັບຫລືວີຊ່າທີ່ໃຊ້ເປັນຜົນ | **40** |
| **Registration Certificate from a Professional Board** | ໜັງສືລົງທະບຽນຈາກກຣົມລົງທະບຽນຂອງນັກວິຊາຊີພ ຕົວຢ່າງ ນາຍໝໍ, ພະຍາບານ, ໝໍປົວແຂ້ວ, ໝໍກາຍພາບບຳບັດ, ນັກບັນຊີ | **40** |
| **Trade Certificate** | ໃບປະກາສນີຍາບັດການຄ້າຂອງອ໊ອສເຕຣເລັຍໃນຊື່/ຊື່ເກົ່າຂອງທ່ານ | **40** |
| **Veterans' Affairs Gold Card** | ບັດທອງຂອງ Department of Veteran's Affairs ອັນປັດຈຸບັນອອກໃຫ້ໃນຊື່ຂອງທ່ານ | **40** |

| ເອກກະສານ | ຄຳອະທິບາຍ/ລັກສນະ | ຄະແນນ |
|---|---|---|
| **Reference from ATSI Organisation** | ຫນັງສືອ້າງອີງຈາກສມາຄົມ ອາບໍຣິຈິໂນ/ທໍເຣັສສເຕຣດໄອແລັນເດີ ຊຶ່ງມີຣາຍລະອຽດຂອງຜູ່ເປັນພຍານຢ່າງຄົບຖ້ວນພ້ອມດ້ວຍລະຍະເວລາທີ່ເຂົາຮູ້ຈັກທ່ານ. ນີ້ຕ້ອງຖືກກວດເບິ່ງກັບສມາຄົມນັ້ນໆ | **20** |
| **Educational Report or Reference** | ໃບຣາຍງານຂອງໂຮງຮຽນ/ການສຶກສາຫລືຫນັງສືອ້າງອີງ ໃນຊື່/ຊື່ເກົ່າຂອງທ່ານ. ນີ້ຕ້ອງຖືກກວດເບິ່ງກັບ (ໂຮງຮຽນ/TAFE/ມະຫາວິທຍາລັຍ) | **20** |
| **Student ID Card** | ບັດນັກຮຽນອັນປັດຈຸບັນອອກໃຫ້ໃນຊື່ຂອງທ່ານ ພ້ອມດ້ວຍລາຍເຊັນແລະ/ຫລືຮູບ (ໂຮງຮຽນ/TAFE/ມະຫາວິທຍາລັຍ) | **20** |
| **PAYG Payment Summary (Group Certificate)** | ໜັງສືສລຸບການຈ່າຍ PAYG ອັນປັດຈຸບັນ ຫລື ຫນັງສືແຈ້ງຣາຍໄດ້ປະຈຳປີ, ບໍ່ເກີນກວ່າ2ປີ ພ້ອມດ້ວຍນຳເບີແຈ້ງແທັກຊ໌. ນີ້ຕ້ອງກວດເບິ່ງກັບນາຍຈ້າງ | **20** |
| **Insurance Renewal** | ຫນັງສືປະກັນພັຍອັນປັດຈຸບັນຂອງ ເຮືອນ, ສິ່ງຂອງໃນເຮືອນ, ຣົຖ, ເຮືອ, ພືຊຜົນ, ໃນຊື່ຂອງທ່ານແລະມີທີ່ຢູ່ປັດຈຸບັນ. | **20** |
| **Tenancy Agreement or Lease** | ຫນັງສືສັນຍາເຊົ່າເຮືອນໃນຊື່ຂອງທ່ານ ແລະ ບົ່ງບອກທີ່ຢູ່ນຳ | **20** |
| **Medicare Card** | ບັດເມດີແຄຣ໌ທີ່ມີຊື່ທ່ານ | **20** |
| **Motor Vehicle Registration** | ຫນັງສືທະບຽນຣົຖບົ່ງບອກຊື່ແລະທີ່ຢູ່ອັນດຽວກັນກັບເອກກະສານຄຳຮ້ອງ ແລະ ຫລັກຖານການຈ່າຍເງິນ | **20** |
| **Other Overseas Documents** | ເອກກະສານອື່ນໆຈາກຕ່າງປະເທດຫລືພາສປອຣ໌ຕ່າງປະເທດທີ່ຫມົດອາຍຸແລ້ວ ແລະທີ່ມີວີຊ່າເຂົ້າປະເທດ | **20** |
| **Other Licence** | ໃບອະນຸຍາດອັນປັດຈຸບັນອື່ນໆຈາກຣັຖບານກາງ, ຣັຖ, ອານາເຂດ,ອອກໃຫ້ນາຍທ້າຍເຮືອ, ເຮືອ, ຣົຖບັນທຸກ, ເຮືອບິນ ໆລໆ ຕ້ອງມີຮູບແລະລາຍເຊັນຂອງທ່ານ. ບໍ່ແມ່ນໃບອະນຸຍາດຝຶກເບັດ ຫລືຂັບເຮືອແບບສມັກຫລິ້ນ. | **20** |
| **Proof of Age Card** | ບັດຫລັກຖານບອກອາຍຸທີ່ອອກໃຫ້ໂດຍຫ້ອງການຣັຖບານໃນຊື່ພ້ອມດ້ວຍຮູບ ແລະ/ຫລືລາຍເຊັນຂອງທ່ານ | **20** |
| **Rates Notice** | ໃບຈ່າຍຄ່າເທສບານອັນປັດຈຸບັນໃນຊື່ຂອງທ່ານ ແລະ ບົ່ງບອກທີ່ຢູ່ ແລະ ຫລັກຖານການຈ່າຍເງິນ | **20** |
| **Utility Account** | ໃບຈ່າຍຄ່າແກັສ, ນ້ຳ, ໄຟຟ້າ, ຫລື ໂທຣະສັພ ໃນຊື່ຂອງທ່ານ ແລະ ບົ່ງບອກທີ່ຢູ່ ແລະ ຫລັກຖານການຈ່າຍເງິນ | **20** |
| **Share Certificate** | ໃບປະກາສນີຍາບັດຂອງແຊຣ໌ ອອກໃຫ້ໃນຊື່ຂອງທ່ານ | **10** |
| **Electoral Enrolment** | ຫລັກຖານການລົງທະບຽນອອກສຽງເລືອກຕັ້ງໃນຊື່ຂອງທ່ານແລະທີ່ຢູ່ປັດຈຸບັນ | **10** |
| **Other Financial Documents** | ເອກກະສານອື່ນໆກ່ຽວກັບການເງິນເຊັ່ນໃບຣາຍງານເງິນທ້ອນບຳນານ, ປະກັນພັຍຊີວິດ, ເງິນຝາກທະນາຄານເປັນເທີມ, ທີ່ອອກໃຫ້ໃນຊື່ຂອງທ່ານຊຶ່ງບໍ່ນານກວ່າ 12 ເດືອນ. ບໍ່ແມ່ນຫນັງສືຊື້ຂອງຜ່ອນສົ່ງຫລືເຊົ່າຂອງ. | **10** |
| **Health Insurance Card** | ບັດປະກັນພັຍສຸຂພາບທີ່ບົ່ງບອກຊື່ທ່ານ | **10** |
| **Motoring Association Membership Card** | ບັດສະມາຊິກຫລືເອກກະສານອັນປັດຈຸບັນທີ່ອອກໃຫ້ໃນຊື່ທ່ານໂດຍ: NRMA, RACQ, RACV, RAA, RACT, RAC(WA), AANT. | **10** |
| **Taxation Notice of Assessment** | ຫນັງສືແຈ້ງການປະເມີນຈາກຫ້ອງການເກັບພາສີອັນປັດຈຸບັນໃນຊື່ຂອງທ່ານ ຕ່ຳກວ່າ 2 ປີ | **10** |
| **Employment Records** | ຫນັງສືແຈ້ງການຢຸດ, ຫນັງສືແຍກກັນ, ຣາຍງານຫລືຫນັງສືອ້າງອີງຈາກນາຍຈ້າງ ໃນຊື່ຂອງທ່ານ. ນີ້ຕ້ອງຖືກກວດເບິ່ງກັບນາຍຈ້າງ. | **10** |

ເພື່ອເອົາຂໍ້ມູນເພີ້ມຕື່ມເປັນພາສາອື່ນໆນອກຈາກພາສາອັງກິດ, ໂທຣະສັບຫາ ເບີ **13 1202*.**
ຢ້ຽມເບິ່ງເວັບໄຊດ໌ຂອງພວກເຮົາ ທີ່ **www.centrelink.gov.au**

* ໂທຣະສັບຫາເບີທີ່ເລີ້ມຕົ້ນດ້ວຍເລກ 13 ເສັຍຄ່າ 25 ເຊັນ ຈາກບ່ອນໃດກໍຕາມທົ່ວອອັສເຕຣເລັຍ. ໂທຣະສັບຫາເບີທີ່ເລີ້ມຕົ້ນດ້ວຍເລກ 1800 ແມ່ນບໍ່ເສັຍຄ່າ. ໂທຣະສັບຈາກຕູ້ສາທາຣະນະ ຫລື ມືຖື ຈະເສັຍຄ່າໃນອັດຕຣາສູງຂື້ນ.